ບໍ່ເອົາໃຈໃສ່ສຸຂະພາບຂອງແມ່ ແລະ ເດັກ

ບົດທີ 1.4: ສາເຫດຂອງການຂາດສານອາຫານ

ຄຳຖາມ:

- **ໃນຮູບນີ້ທ່ານເຫັນຫຍັງແດ່?**
  - ແມ່ຍິງຖືພາກຳລັງແບກຟືນ (ໜັກ).
  - ແມ່ກຳລັງໃຫ້ນົມລູກນ້ອຍຂອງລາວ (ຕ່ຳກວ່າ 6 ເດືອນ) ນົມທຽມ (ເບິ່ງຂວດນົມ ແລະ ກ່ອງນົມຜົງ) ຫຼື ອາຫານ ແທນການໃຫ້ນົມແມ່.
  - ແມ່ ແລະ ເດັກນ້ອຍກຳລັງອົດອາຫານ (ບໍ່ມີອາຫານກິນ).

- **ມັນກ່ຽວຂ້ອງກັບການຂາດສານອາຫານແນວໃດ?**

ການຂາດສານອາຫານສາມາດເກີດຈາກຄວາມບໍ່ເອົາໃຈໃສ່ຕໍ່ສຸຂະພາບຂອງແມ່ ແລະ/ຫຼື ເດັກນ້ອຍ, ເຊັ່ນ: ແມ່ຍິງຖືພາເຮັດວຽກໜັກເກີນໄປ, ອົດກິນອາຫານ ຫຼື ເລືອກກິນອາຫານບາງປະເພດ ເນື່ອງຈາກການຫ້າມທາງວັດທະນະທຳໃນຂະນະທີ່ຖືພາ ຫຼື ຫຼັງເກີດລູກ (ຄະລຳອາຫານ). ເມື່ອຜູ້ເປັນແມ່ອອກໄປເຮັດວຽກຢູ່ໄຮ່ໄກຈາກບ້ານ, ຈະເອົາລູກນ້ອຍໄວ້ຢູ່ກັບຜູ້ອື່ນ (ແມ່ເຖົ້າ) ເພື່ອເບິ່ງແຍງ ແລະ ໃຫ້ກິນເຂົ້າ ແລະ ນົມຜົງ (ນົມປ໋ອງ)

- **ຢູ່ບ້ານເຮົາ (ຄົນໃນບ້ານ) ເປັນແນວນີ້ບໍ່?**

ເປັນ, ຄົນຢູ່ບ້ານເຮົາສ່ວນຫຼາຍແມ່ນເປັນແນວນີ້.

- **ພວກເຮົາຄວນເຮັດແນວໃດເພື່ອປ້ອງກັນ ຫຼື ແກ້ໄຂບັນຫາເຫຼົ່ານີ້?**
  - ແມ່ຍິງຖືພາ ແລະ ຫຼັງເກີດລູກຄວນຫຼີກລ່ຽງການເຮັດວຽກໜັກ ແລະ ຕ້ອງກິນອາຫານທີ່ຫຼາກຫຼາຍ ແລະ ມີປະໂຫຍດ.
  - ບໍ່ໃຫ້ອາຫານ, ນົມຜົງ, ນົມຂຸ້ນ, ອາຫານເສີມ ຫຼື ນ້ຳໃຫ້ເດັກນ້ອຍອາຍຸຕ່ຳກວ່າ 6 ເດືອນ (ອະທິບາຍເພີ່ມເຕີມ). ນົມແມ່ພຽງຢ່າງດຽວ ກໍ ພຽງພໍກັບຄວາມຕ້ອງການຂອງເດັກອາຍຸຕ່ຳກວ່າ 6 ເດືອນ.
  - ແມ່ຍິງ ແລະ ເດັກນ້ອຍບໍ່ຄວນອົດອາຫານ ແລະ ຄວນກິນອາຫານໃຫ້ຫຼາກຫຼາຍ. ທຸກໆຄາບອາຫານແມ່ນມີຄວາມສຳຄັນ.